ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 557 /ທຫລ

ນະຄອນຫລວງວຽງຈັນ, ວັນທີ 17 JUL 2018

# ຂໍ້ຕົກລົງ

## ວ່າດ້ວຍການປັບປຸງຫຼັກການຮັກສາລະດັບເງິນແຮຝາກບັງຄັບ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມລະບຽບກ່ຽວກັບເງິນແຮຝາກບັງຄັບ ສະບັບເລກທີ 01/ທຫລ, ລົງວັນທີ 21 ເມສາ 2014;
- ອີງຕາມຂໍ້ຕົກລົງກ່ຽວກັບການປັບປຸງຫຼັກການຮັກສາລະດັບເງິນແຮຝາກບັງຄັບ ສະບັບເລກທີ 175/ທຫລ, ລົງວັນທີ 28 ກຸມພາ 2017;

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ສ້າງຂຶ້ນມາເພື່ອປັບປຸງຫຼັກການຮັກສາລະດັບເງິນແຮຝາກບັງຄັບຂອງທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ທີ່ກຳນົດອອກ.

**ມາດຕາ 2 ປະເພດເງິນຝາກ ແລະ ໜີ້ສິນຂອງທະນາຄານ ທີ່ຕ້ອງແຮຝາກບັງຄັບ**

1. ເງິນຝາກທຸກປະເພດທີ່ມີອາຍຸ 1 ປີລົງມາ ທີ່ທະນາຄານທຸລະກິດຮັບຝາກ ແມ່ນຕ້ອງໄດ້ແຮຝາກບັງຄັບໄວ້ນຳທະນາຄານແຫ່ງ ສປປ ລາວ ຕາມອັດຕາສ່ວນ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
2. ສຳລັບໜີ້ສິນໄລຍະສັ້ນອື່ນໆຂອງທະນາຄານທຸລະກິດ ແມ່ນຍັງບໍ່ຕ້ອງໄດ້ຝາກບັງຄັບເທື່ອ.

**ມາດຕາ 3 ຫຼັກການຮັກສາລະດັບເງິນແຮຝາກບັງຄັບ**

ທະນາຄານທຸລະກິດຕ້ອງຮັກສາເງິນແຮຝາກບັງຄັບ ໃນແຕ່ລະທ້າຍມື້ໄວ້ນຳທະນາຄານແຫ່ງ ສປປ ລາວ ໃຫ້ຄົບຖ້ວນດັ່ງນີ້:

1. ເງິນແຮຝາກບັງຄັບສຳລັບສະກຸນເງິນກີບແມ່ນຫ້າສ່ວນຮ້ອຍ (5%) ໃນນັ້ນປະກອບມີ:

- ເປັນເງິນສົດ (ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ) ບໍ່ຕ່ຳກວ່າສິບສ່ວນຮ້ອຍ (10%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ;

- ເປັນຫຼັກຊັບທີ່ບໍ່ມີພາລະຜູກພັນ ຫຼື ພັນທະບັດ ແລະ ພັນທະບັດປ້ອງຊໍາລະໜີ້ໂຄງການລົງທຶນຂອງລັດ ຕາມການກໍານົດຂອງ ທຫລ ໃນແຕ່ລະໄລຍະ ບໍ່ເກີນເກົ້າສິບສ່ວນຮ້ອຍ (90%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ.

2. ເງິນແຮຝາກບັງຄັບສໍາລັບສະກຸນເງິນຕາຕ່າງປະເທດສິບສ່ວນຮ້ອຍ (10%) ໃນນັ້ນປະກອບມີ:

- ເປັນເງິນສົດ (ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ) ບໍ່ຕໍ່າກວ່າເຈັດສິບຫ້າສ່ວນຮ້ອຍ (75%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ;
- ເປັນຫຼັກຊັບທີ່ບໍ່ມີພາລະຜູກພັນ ຫຼື ພັນທະບັດ ຕາມການກໍານົດຂອງ ທຫລ ໃນແຕ່ລະໄລຍະ ບໍ່ເກີນຊາວຫ້າສ່ວນຮ້ອຍ (25%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ໃຫ້ທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກົມບໍລິການທະນາຄານ, ກົມບັນຊີແລະການເງິນ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງກ່ຽວກັບການປັບປຸງຫຼັກການຮັກສາລະດັບເງິນແຮຝາກບັງຄັບ ສະບັບເລກທີ 175/ທຫລ, ລົງວັນທີ 28 ກຸມພາ 2017.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

**ສົມພາວ ໄຟສິດ**